Paid Leave Oregon

# ທຸລະກິດສ່ວນຕົວ
## ລາຍການກວດຄືນ

ໃຫ້ນຳໃຊ້ລາຍການກວດຄືນນີ້
ເພື່ອກະກຽມການເລືອກການຄຸ້ມຄອງໃນຖານະຜູ້ເຮັດທຸລະກິດສ່ວນຕົວ
ສຳລັບການລາພັກແບບໄດ້ຮັບຄ່າຈ້າງໃນ ອໍເຣກອນ (Paid Leave Oregon).
ຂໍ້ມູນ: paidleave.oregon.gov

ການລາພັກແບບໄດ້ຮັບຄ່າຈ້າງໃນອໍເຣກອນ ຊ່ວຍໃຫ້ພະນັກງານໃນ ອໍເຣກອນ ສາມາດລາພັກວຽກ ເພື່ອເຫດຜົນດ້ານຄອບຄົວ, ສຸຂະພາບ ແລະການລາພັກເພື່ອຄວາມປອດໄພ.

## ວັນສຳຄັນທີ່ຄວນເອົາໃຈໃສ່

**ວັນທີ 1 ມັງກອນ 2023** ບຸກຄົນທີ່ມີທຸລະກິດສ່ວນຕົວສາມາດເລີ່ມເລືອກການຄຸ້ມຄອງການລາພັກແບບໄດ້ຮັບຄ່າຈ້າງ (Paid Leave coverage)

**ວັນທີ 3 ກັນຍາ 2023** ເງິນຊ່ວຍເຫຼືອຈະເລີ່ມຕົ້ນ

ຖ້າທ່ານເປັນບຸກຄົນເຮັດທຸລະກິດສ່ວນຕົວ, ທ່ານຈະບໍ່ໄດ້ຮັບການຄຸ້ມຄອງໂດຍອັດຕະໂນມັດ ພາຍໃຕ້ ການລາພັກແບບໄດ້ຮັບຄ່າຈ້າງຂອງລັດອໍເຣກອນ (Paid Leave Oregon).
ທ່ານສາມາດເລືອກການຄຸ້ມຄອງໄດ້ຖ້າວ່າ:

- ☐ ທ່ານເຮັດວຽກໃນລັດອໍຣາກ້ອນ; ແລະ
- ☐ ທ່ານມີລາຍໄດ້ສຸດທິຢ່າງໜ້ອຍ $1,000 ໃນລັດອໍຣາກອນຈາກທຸລະກິດສ່ວນຕົວ (ລາຍໄດ້ຫຼັງຈາກຫັກຄ່າໃຊ້ຈ່າຍອອກແລ້ວ) ໃນປີງົບປະມານກ່ອນ ກ່ອນທີ່ທ່ານຈະຍື່ນຂໍ.

## ຂ້າພະເຈົ້າແມ່ນຜູ້ມີທຸລະກິດສ່ວນຕົວບໍ?

ລຸ່ມນີ້ແມ່ນນິຍາມຄວາມໝາຍຂອງການລາພັກແບບໄດ້ຮັບຄ່າຈ້າງ (Paid Leave Oregon) ສຳລັບຜູ້ທີ່ມີທຸລະກິດສ່ວນຕົວ:

- ☐ ຖ້າທ່ານເຮັດວຽກໃຫ້ກັບທຸລະກິດຂອງທ່ານເອງ ແທນທີ່ຈະເຮັດວຽກໃຫ້ນາຍຈ້າງ; ແລະ
- ☐ ທ່ານລາຍງານຜົນກຳໄລຈາກທຸລະກິດຂອງທ່ານເປັນລາຍໄດ້ຈາກການມີທຸລະກິດສ່ວນຕົວ ໃນເອກະສານພາສີຂອງທ່ານ.

## ໃຫ້ກຽມພ້ອມ

ທ່ານສາມາດເລືອກ ການຄຸ້ມຄອງການລາພັກແບບໄດ້ຮັບຄ່າຈ້າງໃນ ອໍຣາກອນ (Paid Leave Oregon) ນັບແຕ່ວັນທີ 1 ມັງກອນ 2023 ເປັນຕົ້ນໄປ. ທ່ານຈະເລີ່ມດ້ວຍການສ້າງ ບັນຊີ ໃນ Frances Online. ນີ້ແມ່ນບາງຢ່າງທີ່ທ່ານຄວນຈົດຈໍາເອົາໄວ້:

- ☐ ທ່ານຈະສ້າງບັນຊີໃນ Frances Online ເປັນ ທຸລະກິດສ່ວນຕົວ (Self-Employed).
- ☐ ຖ້າທ່ານເລືອກ ການລາພັກແບບໄດ້ຮັບຄ່າຈ້າງ, ທ່ານຈໍາເປັນຕ້ອງຕົກລົງເຫັນດີທີ່ຈະຈ່າຍເງິນປະກອບສ່ວນຢ່າງໜ້ອຍສາມປີ.
- ☐ ທ່ານຈໍາເປັນຕ້ອງມີສໍາເນົາເອກະສານການເສຍພາສີລາຍໄດ້ສ່ວນບຸກຄົນຂອງລັດອໍຣາກອນແລະລັດຖະບານກາງສໍາລັບປີກ່ອນ.

## ຈະເລືອກການລາພັກແບບໄດ້ຮັບຄ່າຈ້າງ (Paid Leave Oregon) ແນວໃດ

**ຂັ້ນຕອນທີ 1**: ທ້ອນໂຮມເອກະສານຂອງທ່ານ

ທ່ານຈໍາເປັນຕ້ອງມີເອກະສານລຸ່ມນີ້ໃຫ້ພ້ອມ ກ່ອນທີ່ທ່ານຈະຍື່ນຮ້ອງຂໍ:

- ☐ ເອກະສານເສຍພາສີລາຍໄດ້ສ່ວນບຸກຄົນຂອງລັດອໍຣາກອນ ແລະລັດຖະບານກາງສໍາລັບປີກ່ອນ (ຖ້າທ່ານບໍ່ມີສໍາເນົາ, ທ່ານສາມາດຂໍສໍາເນົາໄດ້ຈາກ Oregon Department of Revenue).
- ☐ ລາຍໄດ້ສຸດທິ ຈາກທຸລະກິດສ່ວນຕົວ (ລາຍໄດ້ຫຼັງຈາກຫັກຄ່າໃຊ້ຈ່າຍ) ຈາກການປີງົບປະມານກ່ອນ.

**ຂັ້ນຕອນທີ 2**: ຍື່ນຂໍການຄຸ້ມຄອງສໍາລັບຜູ້ມີທຸລະກິດສ່ວນຕົວ
ໃຊ້ Frances Online ເພື່ອຍື່ນຂໍສະໝັກການຄຸ້ມຄອງການລາພັກແບບໄດ້ຮັບຄ່າຈ້າງ.

**ຂັ້ນຕອນທີ 3**: ຈ່າຍເງິນປະກອບສ່ວນສາມເດືອນລະຄັ້ງ
ພາຍຫຼັງທີ່ຄໍາຮ້ອງຂອງທ່ານໄດ້ຮັບການອະນຸມັດ, ກົມການຈ້າງງານຂອງ ອໍຣາກອນ (Oregon Employment Department) ຈະສົ່ງກູບອງການຊໍາລະເງິນສໍາລັບຈໍານວນເງິນປະກອບສ່ວນທີ່ຄົບກໍານົດຈ່າຍປະຈໍາໄຕມາດ (ຜູ້ທີ່ມີທຸລະກິດສ່ວນຕົວ ຈ່າຍສ່ວນຂອງພະນັກງານ, 60% ຂອງ 1% ໃນລາຍໄດ້ສຸດທິ ຈາກການເຮັດທຸລະກິດສ່ວນຕົວ ແບ່ງອອກເປັນສີ່ການຊໍາລະແບບສາມເດືອນລະຄັ້ງ).
ຈ່າຍໃນວັນທີ Revenue Online.

**ຂັ້ນຕອນທີ 4**: ການກວດສອບຢືນຢັນລາຍໄດ້ປະຈໍາປີ
ກ່ອນວັນທີ 30 ເມສາ ຂອງແຕ່ລະປີ (ຫຼື ກ່ອນວັນທີ 30 ຕຸລາ ຖ້າທ່ານຍືດເວລາອອກໃນການຍື່ນລາຍການເສຍພາສີຂອງທ່ານ), ທ່ານຕ້ອງສະໜອງ ສໍາເນົາເອກະສານການເສຍພາສີລາຍໄດ້ ຂອງ ອໍຣາກອນ ແລະລັດຖະບານກາງ ໃຫ້ກັບກົມການຈ້າງງານ (Oregon Employment Department) ໂດຍໃຊ້ Frances Online.